ອົງການ ເຮວວີຕັດ ສະວິດເພື່ອການຮ່ວມມືສາກົນ
ຕູ້ ປ.ນ. 6367, ໜ່ວຍ 09, ເຮືອນເລກທີ 155, ບ້ານທ່າພະລານໄຊ;
ເມືອງສີສັດຕະນາກ ນະຄອນຫຼວງວຽງຈັນ, ສປປ ລາວ
ໂທລະສັບ:+(856-21) 263 189; 485 016/ 017;
ແຟັກ:+(856-21) 263 190
helvetas.laos@gmail.com; www.helvetas-laos.org

# ຫລັກການປະພຶດຂອງພະນັກງານ

## ຫລັກການ

1. ອົງການ HELVETAS ລາວ ສົ່ງເສີມການສ້າງສະພາບແວດລ້ອມຂອງຫ້ອງການໃຫ້ມີຄວາມປອດໄພ ແລະ ມີບັນຍາກາດການເຮັດວຽກຢ່າງມືອາຊີບ ສໍາລັບພະນັກງານທຸກຄົນ, ຄູ່ຮ່ວມງານ ແລະ ບັນດາກຸ່ມເປົ້າໝາຍຂອງອົງການ.

2. ອົງການ HELVETAS ລາວ ສ້າງການຮ່ວມມືຢ່າງມີປະສິດທິຜົນ ແລະ ຍືນຍົງ ໂດຍການເຄົາລົບ ແລະ ມີຮັບຜິດຊອບຮ່ວມກັນກັບບັນດາອົງການຈັດຕັ້ງຄູ່ຮ່ວມງານ ບໍ່ວ່າຈະເປັນອົງການຈັດຕັ້ງລັດ, ອົງການຈັດຕັ້ງທີ່ບໍ່ສັງກັດລັດທັງພາຍໃນ ແລະ ສາກົນ.

3. ອົງການ HELVETAS ລາວ ເຮັດວຽກເພື່ອກຸ່ມເປົ້າຫມາຍ, ໂດຍສະເພາະກັບກູ່ມຄົນທີ່ກະຕືລືລົ້ນ ແລະ ສົນໃຈຢາກຮ່ວມມືນໍາ. ການເຮັດວຽກຮ່ວມກັບກູ່ມເປົ້າຫມາຍແມ່ນຢູ່ບົນຫລັກການ ຄວາມຕ້ອງການຕົວຈິງຂອງກຸ່ມເປົ້າໝາຍ, ແນໃສ່ກູ່ມເປົ້າຫມາຍທີ່ທຸກຍາກເປັນບູມລິມມະສິດ, ເຂົ້າເຖິງທຸກກູ່ມຄົນ, ກິດຈະກໍາມີຄວາມຍືນຍົງ, ມີສ່ວນຮ່ວມ, ມີຄວາມຮັບຜິດຊອບຕໍ່ຜົນທະທົບທາງສັງຄົມ-ດ້ານວັດທະນະທໍາ ແລະ ສິ່ງແວດລ້ອມ, ສົ່ງເສີມຄວາມເປັນເອກະລາດ ແລະ ເສີມສ້າງ ຄວາມເຂັ້ມແຂງໃຫ້ແກ່ບັນດາກຸ່ມເປົ້າໝາຍຂອງຕົນ.

ຫຼັກການປະພຶດຂອງພະນັກງານດັ່ງຕໍ່ໄປນີ້ ຖືກສ້າງຂຶ້ນອີງໃສ່ຫລັກການທັງ 3 ຢ່າງ ເຊິ່ງພະນັກງານ ແລະ ທີ່ປຶກສາແຕ່ລະຄົນໃນອົງການ HELVETAS ຕ້ອງປະຕິບັດຕາມ, ຍົກສູງ ແລະ ສົ່ງເສີມການຈັດຕັ້ງປະຕິບັດຢ່າງເອົາໃຈໃສ່ດັ່ງຕໍ່ໄປນີ້:

## ການປະພຶດສ່ວນບຸກຄົນ

### 1. ດ້ານການຈໍາແນກ

ອົງການ HELVETAS ແມ່ນອົງການຈັດຕັ້ງທີ່ເປັນກາງທາງດ້ານບົດບາດຍິງ-ຊາຍ, ວັດທະນະທໍາ, ເຊື້ອຊາດ, ລັດທິ, ການເມືອງ ແລະ ສາສະໜາ. ອົງການ HELVETAS ສົ່ງເສີມການຢູ່ຮ່ວມກັນຢ່າງມີເຄົາລົບ, ອົດທົນ ແລະ ມີຄວາມສະເໝີພາບຕໍ່ກັນໃນກູ່ມພະນັກງານ, ຄູ່ຮ່ວມງານ, ຜູ້ປະກອບສ່ວນ, ຜູ້ເຂົ້າຮ່ວມ ແລະ ບັນດາກຸ່ມເປົ້າໝາຍຕ່າງໆ. ທຸກຮູບການຈໍາແນກຕໍ່ກັບເລື່ອງທີ່ໄດ້ກ່າວມາຂ້າງເທິງນັ້ນ ແມ່ນຖືວ່າຜິດຕໍ່ຫລັກການປະພຶດສະບັບນີ້ ແລະ ຈະຕ້ອງໄດ້ຮັບການປະຕິບັດວິໄນຕາມສົມຄວນ.

ອົງການ ເຮວວີຕັດ ສະວິດເພື່ອການຮ່ວມມືສາກົນ
ຕູ້ ປ.ນ. 6367, ໜ່ວຍ 09, ເຮືອນເລກທີ 155, ບ້ານທ່າພະລານໄຊ;
ເມືອງສີສັດຕະນາກ ນະຄອນຫຼວງວຽງຈັນ, ສປປ ລາວ
ໂທລະສັບ:+(856-21) 263 189; 485 016/ 017;
ແຟັກ:+(856-21) 263 190
helvetas.laos@gmail.com; www.helvetas-laos.org

## 2. ດ້ານ**ການປະພຶດ**ທີ່ເປັນການ**ລ່ວງລະເມີດ**ສິດຄົນອື່ນ

ອົງການ HELVETAS ຮັບຮູ້ວ່າ ພະນັກງານ ແລະ ຜູ່ໄດ້ຮັບຜົນປະໂຫຍດທັງຫມົດມີສິດທີ່ຈະໄດ້ຮັບການປະຕິບັດດ້ວຍຄວາມເຄົາລົບ. ດັ່ງນັ້ນການລ່ວງລະເມີດທາງກາຍຍະພາບ, ທາງເພດ ແລະ ຈິດໃຈ ເຊິ່ງໃນນັ້ນລວມທັງການເວົ້າຫລິ້ນ ຕະຫຼົກລາມົກ ທາງເພດ ແລະ ສຽດສີທາງເຊື້ອຊາດ ຫລື ການປະພຶດທີ່ເຮັດໃຫ້ຄົນອື່ນຮູ້ສຶກອຶດອັດບໍ່ສະບາຍໃຈ ຈະບໍ່ໄດ້ຮັບການອານຸໂລມດ້ານການປະຕິບັດວິໄນ.

## 3. ດ້ານລະດັບການສ້າງສາຍສຳພັນພິເສດລະຫ່ວາງພະນັກງານ

ພະນັກງານທຸກຄົນ ຄວນຫລີກລ່ຽງການສ້າງສາຍສຳພັນ ທີ່ອາດສົ່ງຜົນກະທົບຕໍ່ວຽກງານ ເຊິ່ງນຳໄປສູ່ການນິຍົມຊົມຊອບບຸກຄົນໃດຫນຶ່ງເປັນພິເສດ (ໃຫ້ທ້າຍກັນ); ການໃຊ້ອຳນາດໃນທາງທີ່ບໍ່ຖືກຕ້ອງ; ການເລື່ອນຂັ້ນ/ຊັ້ນ ຫລື ການໄລ່ອອກຢ່າງບໍ່ສົມເຫດສົມຜົນ.

ສາຍສຳພັນທາງເພດລະຫວ່າງ ພະນັກງານຂອງອົງການ HELVETAS ແລະ ຫລື ກັບກຸ່ມເປົ້າຫມາຍໃນຊຸມຊົນ ທີ່ໄດ້ຮັບຜົນປະໂຫຍດແມ່ນຫ້າມບໍ່ໃຫ້ມີໂດຍເດັດຂາດໃນໄລຍະການຈັດຕັ້ງປະຕິບັດໂຄງການ.

## 4. ດ້ານສຸຂະພາບ ແລະ ຄວາມປອດໄພ

ພະນັກງານຂອງອົງການ HELVETAS ທຸກຄົນ ຄວນມີຄວາມຮັບຜິດຊອບຕໍ່ສຸຂະພາບ ແລະ ຄວາມປອດໄພຂອງເພື່ອນຮ່ວມງານ, ຄູ່ຮ່ວມງານ ແລະ ຜູ້ ໄດ້ຮັບສິດຜົນປະໂຫຍດ ໂດຍການບໍ່ຊຸກຍູ້ພຶດຕິກຳທີ່ພາໃຫ້ເກີດອັນຕະລາຍ ແລະ ບໍ່ສົ່ງເສີມແບບວິທີປະຕິບັດໃດໆທີ່ອາດພາໃຫ້ເກີດ ອັນຕະລາຍເຊັ່ນ:

- ຫ້າມນຳໃຊ້ຢາເສບຕິດໃນຊົ່ວໂມງເຮັດວຽກ*

- ຫ້າມດື່ມສິ່ງມຶນເມົາໃນຊົ່ວໂມງເຮັດວຽກ. ໃນກໍລະນີ "ທີ່ຈຳເປັນ" ຕາມຮີດຄອງປະເພນີ, ໃຫ້ດື່ມໄດ້ພຽງແຕ່ໃນປະລິມານທີ່ຈຳກັດໂດຍບໍ່ສົ່ງຜົນກະທົບຕໍ່ຄວາມສາມາດໃນການເຮັດວຽກ. - ***ເຖິງຢ່າງໃດກໍ່ດີ, ອົງການ Helvetas ຊຸກຍູ້ໃຫ້ພະນັກງານຂອງຕົນທຸກຄົນຈຳກັດບໍ່ໃຫ້ເຫດການໃນລັກສະນະດັ່ງກ່າວເກີດຂຶ້ນ ດ້ວຍການແລກປ່ຽນ ແລະ ອະທິບາຍນະໂຍບາຍ ແລະ ຫລັກການປະພຶດຂອງພະນັກງານ ຂອງອົງການ Helvetas ໃຫ້ແກ່ຄົນໃນຂົງເຂດເປົ້າໝາຍ ແລະ ອຳນາດການປົກຄອງກ່ຽວຂ້ອງໄດ້ຮັບຮູ້ ຕົວຢ່າງ: ຄູ່ຮ່ວມງານທີ່ ເປັນລັດຖະບານລາວ, ນາຍບ້ານ, ກຸ່ມເປົ້າໝາຍ/ຜູ້ເຂົ້າຮ່ວມ ໂຄງການ ກ່ອນທີ່ຈະເລີ່ມການຈັດຕັ້ງປະຕິບັດກິດຈະກຳ ຫລື ໂຄງການຢູ່ທ້ອງຖິ່ນເປົ້າໝາຍ.***

- ອະນຸຍາດໃຫ້ດື່ມສິ່ງມຶນເມົາໄດ້ໃນປະລິມານທີ່ເໝາະສົມໃນ *ໄລຍະເວລາຫວ່າງພັກຜ່ອນ* ພາຍໃຕ້ເງື່ອນໄຂທີ່ວ່າ ການດື່ມນັ້ນຈະບໍ່ສົ່ງຜົນກະທົບຕໍ່ຄວາມປອດໄພຂອງຕົນເອງແລະຄົນອື່ນໆ, ຄວາມສາມາດຂອງຕົນເອງໃນການປະພຶດຢ່າງມີຄວາມຮັບຜິດຊອບ ແລະ ມີຄວາມເຄົາລົບ, ຫລື ເຮັດໃຫ້ຄວາມສາມາດໃນການຮັກສາຄຸນະພາບການເຮັດວຽກຂອງຕົນຫຼຸດລົງ.

- ຫ້າມພະນັກງານທີ່ຮັບຜິດຊອບການຂັບຂີ່ (ຕົວຢ່າງ: ພະນັກງານຂັບລົດ) ດື່ມສິ່ງມຶນເມົາ ໃນຊົ່ວໂມງວຽກ

- ພະນັກງານທຸກຄົນ (ຜູ່ຂັບລົດ ແລະ ຜູ້ໂດຍສານ) ຕ້ອງຮັບປະກັນ ຄວາມປອດໄພຂອງຕົນ ພ້ອມທັງປະຊາຊົນໃນຂົງເຂດທີ່ເຂົາເຈົ້າຂັບລົດຜ່ານ ແລະ /ຫລື ເຂດທີ່ເປັນຈຸດໝາຍປາຍທາງ:
  - ໃສ່ສາຍແອວຫັດຕິດກັບບ່ອນນັ່ງ ແລະ/ຫລືໃສ່ໝວກກັນກະທົບ
  - ຝຶກການຂັບລົດທີ່ເອົາໃຈໃສ່ຄວາມປອດໄພ, ຂັບດ້ວຍຄວາມໄວທີ່ບໍ່ເປັນອັນຕະລາຍ ເມື່ອເວລາຂັບຜ່ານເຂດທີ່ມີຄົນອາໄສຢູ່ຫລາຍ (ຕົວຢ່າງ: ຜ່ານບ້ານຄົນ)

- ການເມົາແລ້ວຂັບ ບໍ່ພຽງແຕ່ຖືກຫ້າມໂດຍອົງການ Helvetas ເທົ່ານັ້ນ ແຕ່ຍັງຖືກຫ້າມໂດຍກົດໝາຍ

** ໄລຍະເວລາທີ່ເຮັດວຽກຢູ່ບ້ານຕ່າງໆ ຖືວ່າເປັນຊົ່ວໂມງເຮັດວຽກ.*

### 5. ດ້ານການພະນັນ

- ອົງການ HELVETAS ບໍ່ສະໜັບສະໜູນການຫລີ້ນພະນັນ. ການຫລີ້ນການພະນັນໃນຊົ່ວໂມງເຮັດວຽກ ແລະ ຫຼິ້ນໂດຍໃຊ້ເງິນທຶນຂອງໂຄງການ ໃນນັ້ນລວມທັງເງິນເບັ້ຍລ້ຽງ (DSA) ແມ່ນຫ້າມບໍ່ໃຫ້ເຮັດຢ່າງເດັດຂາດ.

### 6. ດ້ານການປົກປ້ອງວັດທະນະທຳທ້ອງຖິ່ນ

- ສົ່ງເສີມວັດທະນະທຳທ້ອງຖິ່ນ ແລະ ການປົກປັກຮັກສາທັກສະ ແລະ ປະເພນີທ້ອງຖິ່ນ
- ການເຂົ້າມີສ່ວນກ່ຽວຂ້ອງ ຫລື ການອະນຸຍາດທັງໆ ທີ່ຮູ້ວ່າບໍ່ຖືກຕ້ອງ ຕໍ່ກັບການໄດ້ມາ ຫລື ການຂາຍວັດຖຸບູຮານພື້ນເມືອງ ແມ່ນຫ້າມບໍ່ໃຫ້ເຮັດເດັດຂາດ. ພະນັກງານທີ່ປະພຶດຕົວດັ່ງກ່າວນັ້ນ ຈະຕ້ອງຮັບຜິດຊອບທັງໃນໜ້າທີ່ອາຊີບ ແລະ ຕໍ່ໜ້າກົດໝາຍ.

## ຫລັກການຂອງການເຮັດວຽກ

### 1. ຄວາມຮັບຜິດຊອບຕໍ່ອົງການ HELVETAS

ອົງການ HELVETAS ບໍ່ແມ່ນອົງການທີ່ເຮັດເພື່ອສ້າງຊື່ສຽງໃຫ້ແກ່ຕົນເອງ ແຕ່ ເຮັດວຽກເພື່ອຊ່ວຍເຫລືອຄົນອື່ນ. ພະນັກງານທຸກຄົນຖືເອົາໜ້າທີ່ຮັບຜິດຊອບຂອງຕົນເອງໃນໂຄງການ ແລະ ພາບລວມຂອງອົງການ HELVETAS ເປັນບູລິມະສິດ. ພະນັກງານທຸກຄົນເປັນຜູ່ຕັດສິນໃຈ ແລະ ກຳນົດທາງເລືອກຕ່າງໆໃນການເຮັດວຽກຕົວຈິງໂດຍອິງໃສ່ຄວາມຮັບຜິດຊອບຂອງຕົນ (TOR) ເປັນສິ່ງທຳອິດ ແລະ ສິ່ງສຳຄັນທີ່ສຸດແມ່ນຮັບປະກັນໃຫ້ໂຄງການຂອງຕົນມີຜົນສຳເລັດ ແລະ ເຮັດໃຫ້ກຸ່ມເປົ້າໝາຍໄດ້ຮັບຜົນໂຫຍດຫລາຍທີ່ສຸດ.

### 2. ສາຍພົວພັນລະຫວ່າງພະນັກງານ

- ພະນັກງານທຸກຄົນ ມີຄວາມຮັບຜິດຊອບຕໍ່ການປະກອບສ່ວນ ແລະ ສ້າງສາຍສຳພັນທີ່ດີໃນການເຮັດວຽກນຳກັນທີ່ເປັນລັກສະນະຊຸກຍູ້ຊ່ວຍເຫລືອກັນ, ເຄົາລົບຊຶ່ງກັນ ແລະ ກັນ, ມີຄວາມຮັບຜິດຊອບ, ມີຄວາມສະເໝີພາບ ແລະ ຊື່ສັດ.
- ການຕັດສິນໃຈເຂົ້າຮ່ວມເປັນພະນັກງານໃນທີມງານແມ່ນ ຄວນມາຈາກຄວາມສາມາດທາງວິຊາອາຊີບ, ສຸຂະພາບ ແລະ ຄວາມເຕັມໃຈທີ່ປະຕິບັດຫລັກການປະພຶດຂອງທີມງານ.
- ການຕັດສິນໃຈເຂົ້າຮ່ວມເປັນພະນັກງານໃນທີມງານ **ບໍ່**ຄວນຕັດສິນບົນພື້ນຖານສະຖານະທາງຄອບຄົວ, ເຊື້ອຊາດ, ເພດ, ສາສະໜາ, ຊົນເຜົ່າ, ສີຜິວ, ສະຖານະພາບສົມຣົດ, ວິຖີທາງເພດ, ອາຍຸ, ຄວາມພິການ ຫລື ສາຍສຳພັນທາງ ການເມືອງ.
- ຫ້າມໃຊ້ລະບົບວົງສາຄະນາຍາດ (ຕົວຢ່າງ: ການໃຫ້ວຽກເຮັດ ຫລື ການເຮັດສັນຍາບໍລິການກັບພີ່ນ້ອງ ຫລື ໝູ່ເພື່ອນທັງໆ ທີ່ເຂົາເຈົ້າບໍ່ມີຄຸນະວຸດທິ ຫລື ມີຄຸນະວຸດທິໜ້ອຍກ່ວາຜູ້ສະໝັກຄົນອື່ນ)

ອົງການ ເຮວວີຕັດ ສະວິດເພື່ອການຮ່ວມມືສາກົນ
ຕູ້ ປ.ນ. 6367, ໜ່ວຍ 09, ເຮືອນເລກທີ 155, ບ້ານທ່າພະລານໄຊ;
ເມືອງສີສັດຕະນາກ ນະຄອນຫຼວງວຽງຈັນ, ສປປ ລາວ
ໂທລະສັບ:+(856-21) 263 189; 485 016/ 017;
ແຟັກ:+(856-21) 263 190
helvetas.laos@gmail.com; www.helvetas-laos.org

## 3. ການພົວພັນກັບຄູ່ຮ່ວມງານ

- ພະນັກງານຂອງອົງການ HELVETAS ທຸກຄົນ ມີຄວາມຮັບຜິດຊອບສຸດຄວາມສາມາດຂອງຕົນໃນການຊອກຫາ ແລະ ສ້າງສາຍສຳພັນຄູ່ຮ່ວມງານທີ່ດີ ແລະ ຍືນຍົງ ທີ່ສອດຄ່ອງກັບນະໂຍບາຍ ແລະ ລະບຽບຄຸ້ມຄອງພະນັກງານຂອງອົງການ HELVETAS.
- ພະນັກງານຂອງອົງການ HELVETAS ທຸກຄົນ ມີຄວາມຮັບຜິດຊອບ ໃນເຊີງລຸກ ໃນການແກ້ໄຂກໍລະນີຕ່າງໆ ທີ່ເຂົາເຈົ້າຮູ້ວ່າມີຢູ່ ຫລື ກໍລະນີທີ່ຄູ່ຮ່ວມງານອາດຈະມີສ່ວນກ່ຽວຂ້ອງໃນກິດຈະກຳທີ່ອາດຈະຜິດກົດໝາຍ ຫລື ຜິດຈັນຍາທຳ ເຊິ່ງຂັດກັບບັນດາຂໍ້ຕົກລົງ ແລະ ນະໂຍບາຍຕ່າງໆ ໃນການເປັນຄູ່ຮ່ວມງານກັບອົງການ HELVETAS.

## 4. ການພົວພັນກັບກຸ່ມເປົ້າໝາຍ

- ກຸ່ມເປົ້າໝາຍ ຄວນໄດ້ຮັບການປະຕິບັດດ້ວຍຄວາມເຄົາລົບ, ສະເໝີພາບ ແລະ ເທົ່າທຽມກັນ.
- ພະນັກງານຂອງອົງການ HELVETAS ທຸກຄົນ ມີຄວາມຮັບຜິດຊອບຕໍ່ການຮັບປະກັນວ່າເຂົາເຈົ້າຕື່ນຕົວຕໍ່ວັດທະນະທຳ, ປະເພນີທ້ອງຖິ່ນ ແລະ ກົດໝາຍຂອງປະເທດ. ໃນກໍລະນີທີ່ເຂົາເຈົ້າອາດຈະມີຄ□າຖາມທີ່ກ່ຽວຂ້ອງທີ່ອາດຈະຂັດແຍ່ງກັບຫຼັກການສ່ວນຕົວ ຫລື ຫລັກ ການຂອງອົງການ HELVETAS, ແມ່ນຊຸກຍູ້ໃຫ້ເຂົາເຈົ້າແລກປ່ຽນແກ້ໄຂສະພາບການດັ່ງກ່າວກັບສະມາຊິກທີມງານ ແລະ/ຫລື ຫົວໜ້າຜູ້ຊີ້ນຳ.

## 5. ລະບຽບການນຸ່ງຖື

- ອົງການ HELVETAS ຄາດຫວັງໃຫ້ພະນັກງານທຸກຄົນ ນຸ່ງເຄື່ອງຢ່າງເໝາະສົມ ແລະ ເຄົາລົບຕໍ່ຮີດຄອງປະເພນີ.

## 6. ຄວາມຮັບຜິດຊອບ/ຄວາມໂປ່ງໃສ

- ພະນັກງານຂອງອົງການ HELVETAS ທຸກຄົນ ມີຄວາມຮັບຜິດຊອບ ແລະ ຄວນພັດທະນາລະບົບການຄຸ້ມຄອງຊັບພະຍາກອນມະນຸດ, ໂຄງການ ແລະ ການເງິນທີ່ມີຄວາມໂປ່ງໃສ.
- ໃນກໍລະນີເກີດມີຂໍ້ສົງໃສຮ້າຍແຮງ ຫລື ຫລັກຖານຂອງການນຳໃຊ້ຊັບພະຍາກອນຂອງ ອົງການ HELVETAS ໄປໃນທາງທີ່ຜິດ, ເປັນ ເລື່ອງຈຳເປັນທີ່ພະນັກງານຕ້ອງລາຍງານໃຫ້ຫົວໜ້າຜູ້ຊີ້ນຳ ຫລື ຂັ້ນເທິງຂອງຕົນໄດ້ຮັບຮູ້.

## 7. ການຂັດແຍ່ງດ້ານຜົນປະໂຫຍດ

- ການຕັດສິນໃຈກ່ຽວກັບການວາຈ້າງ/ສັນຍາ/ຈັດຊື້ ຕ້ອງສອດຄ່ອງກັບບັນທັດຖານ/ແນວທາງຊີ້ນຳ ດັ່ງທີ່ໄດ້ກຳນົດໄວ້ໃນພາລະບົດບາດຂອງແຜນງານ ແລະ ໂຄງການ ໂດຍສອດຄ່ອງກັບນະໂຍບາຍຂອງອົງການ HELVETAS.
- ຫລີກລ່ຽງເຫດການທີ່ຜົນປະໂຫຍດສ່ວນຕົວຂັດກັບຜົນປະໂຫຍດຂອງໂຄງການ/ແຜນງານ ແລະ ຂັດກັບຫລັກການຊີ້ນຳ.
- ພະນັກງານ ຈຳເປັນຕ້ອງລາຍງານໃຫ້ຜູ້ບັນຊາຂອງຕົນຮັບຮູ້ ໃນກໍລະນີທີ່ເຂົາເຈົ້າຮູ້ສຶກວ່າ ມີຄວາມສ່ຽງໃນການຂັດແຍ່ງດ້ານສິດຜົນປະໂຫຍດອາດຈະເກີດຂຶ້ນ, ຫລື ຄົ້ນພົບວ່າມີກໍລະນີແບບນັ້ນເກີດຂຶ້ນ. ນີ້ລວມເອົາ: ສາຍສຳພັນສ່ວນຕົວ ກັບຜູ້ສະໜອງການບໍລິການ; ຜູ້ທີ່ຈະເຂົ້າມາເປັນພະນັກງານໃໝ່.

ອົງການ ເຮວວີຕັດ ສະວິດເພື່ອການຮ່ວມມືສາກົນ
ຕູ້ ປ.ນ. 6367, ໜ່ວຍ 09, ເຮືອນເລກທີ 155, ບ້ານທ່າພະລານໄຊ;
ເມືອງສີສັດຕະນາກ ນະຄອນຫຼວງວຽງຈັນ, ສປປ ລາວ
ໂທລະສັບ:+(856-21) 263 189; 485 016/ 017;
ແຟັກ:+(856-21) 263 190
helvetas.laos@gmail.com; www.helvetas-laos.org

## 8. ການໃຫ້ຂອງຂັວນ

- ໃນກໍລະນີທີ່ພະນັກງານຂອງອົງການ HELVETAS 'ໃຫ້ຂອງຂັວນເນື່ອງ'ໃນໂອກາດງານປະເພນີ ຫລື ພິທີການໃດໜຶ່ງ - ຂອງຂັວນດັ່ງກ່າວຄວນໄດ້ຮັບການຮັບຮອງ ແລະ ແຈ້ງລ່ວງໜ້າ (ໃຫ້ມອບຊິນໄດ້ຮັບຮູ້ນຳ), ຖືກກາລະເທສະ ແລະ ມີລາຄາເໝາະສົມ.
- ອະນຸຍາດໃຫ້ພະນັກງານຂອງອົງການ HELVETAS ຮັບເອົາຂອງຂັວນເນື່ອງໃນໂອກາດງານປະເພນີ ຫລື ພິທີການໃດໜຶ່ງ ແຕ່ຕ້ອງເປີດເຜີຍຂອງຂັວນເຫລົ່ານັ້ນ (ໃຫ້ມອບຊິນຮັບຮູ້) ແລະ ຕ້ອງມີການຕັດສິນໃຈຮ່ວມກັນກ່ຽວກັບການນຳໃຊ້/ແຈກຢາຍຂອງຂັວນດັ່ງກ່າວ.
- ຂອງຂັວນບໍ່ວ່າຈະເປັນເປັນຮູບຂອງເງິນ, ຊັບສິນ ຫລື ວັດຖຸສິ່ງຂອງທີ່ໃຫ້ ແລະ ຮັບ ໃນຖານະເປັນສິ່ງຈູງໃຈ, ການບັງຄັບ ຫລື ສິນບົນ ແມ່ນຫ້າມບໍ່ໃຫ້ຮັບ ຫຼື ເອົາໃຫ້ເດັດຂາດ. ພະນັກງານຄົນໃດທີ່ເຮັດຜິດຈະຖືກລົງໂທດ.

## 9. ຊັບສິນ

- ພະນັກງານທຸກຄົນ ມີຄວາມຮັບຜິດຊອບຕໍ່ການບຳລຸງຮັກສາ ແລະ ການນຳໃຊ້ຊັບສິນຂອງຫ້ອງການ, ໂຄງການ ແລະ ຂອງລັດຖະບານໃນສະພາບເງື່ອນໄຂການເຮັດວຽກຕົວຈິງ ເພື່ອຮັບໃຊ້ເປົ້າໝາຍທີ່ຕັ້ງເອົາໄວ້.
- ຄວນຫລີກລ້ຽງການນຳໃຊ້ຊັບສິນຂອງຫ້ອງການ ຫລື ໂຄງການຂອງອົງການ HELVETAS ເພື່ອປະໂຫຍດສ່ວນຕົວ ຍົກເວັ້ນໄດ້ຮັບການຮັບ ຮອງເປັນຂໍ້ຕົກລົງຈາກຫ້ອງການບໍລິຫານໂຄງການ (PO).
- ພະນັກງານທຸກຄົນ ຄວນໃຊ້ຄອມພິວເຕີຫ້ອງການ ແລະ ອິນເຕີເນັດເພື່ອຮັບໃຊ້ເປົ້າໝາຍທີ່ກ່ຽວຂ້ອງກັບວຽກງານເທົ່ານັ້ນ (ຕົວຢ່າງ: ບໍ່ອະນຸຍາດໃຫ້ນຳໃຊ້ເພື່ອເຂົ້າເບິ່ງສື່ລາມົກ, ຟັງເພັງ ແລະເບິ່ງໜັງທີ່ບໍ່ກ່ຽວກັບວຽກ).

## 10. ຄວາມເປັນສ່ວນຕົວ ແລະ ການສື່ສານ

- ແຟ້ມຂໍ້ມູນຂອງພະນັກງານ ຖືເປັນຄວາມລັບເຄັ່ງຄັດ ອະນຸຍາດໃຫ້ເຂົ້າເບິ່ງໄດ້ຫລັງຈາກໄດ້ຮັບອະນຸຍາດເທົ່ານັ້ນ. (ຕົວຢ່າງ: ຈາກຫົວໜ້າອົງການ/ໂຄງການ)
- ພະນັກງານທຸກຄົນ ມີຄວາມຮັບຜິດຊອບຕໍ່ການເຄົາລົບຄວາມເປັນສ່ວນຕົວຂອງພະນັກງານຂອງອົງການ HELVETAS ຄົນອື່ນ. ໃນກໍລະນີ ທີ່ພະນັກງານ ຫາກສາມາດເຂົ້າເບິ່ງຂໍ້ມູນໃນແຟ້ມຂໍ້ມູນສ່ວນຕົວຂອງພະນັກງານຄົນອື່ນໄດ້ໂດຍບໍ່ໄດ້ເຈດຕະນາ, ແມ່ນໃຫ້ຜູ້ກ່ຽວລາຍງານ ເລື່ອງດັ່ງກ່າວໃຫ້ຫົວໜ້າອົງການ/ໂຄງການຮັບຮູ້.
- ຫ້າມເປີດເຜີຍຂໍ້ມູນຂ່າວສານທີ່ເປັນຄວາມລັບກ່ຽວກັບພະນັກງານ. ນີ້ລວມທັງເລື່ອງເງິນເດືອນຂອງພະນັກງານ, ຂໍ້ມູນຕິດຕໍ່ສ່ວນບຸກຄົນ, ຂໍ້ມູນດ້ານສຸຂະພາບ, ຂໍ້ມູນຂ່າວສານຕ່າງໆ ທີ່ກ່ຽວຂ້ອງກັບການໃສ່ວິໄນ ແລະ ອື່ນໆ.
- ຊຸກຍູ້ໃຫ້ພະນັກງານສະແຫວງຫາການຊ່ວຍເຫລືອກ່ຽວເລື່ອງສຸຂະພາບສ່ວນຕົວ (HIV, ການເຈັບປ່ວຍທີ່ຮ້າຍແຮງ, ການຕິດຫາດເສບຕິດ) ທີ່ອາດຈະສົ່ງຜົນກະທົບຕໍ່ຄວາມສາມາດໃນການເຮັດວຽກ, ສະພາບທາງຈິດໃຈ ແລະ/ຫລື ທາງຮ່າງກາຍ. ຂໍ້ມູນຂ່າວສານເຫລົ່ານີ້ ຖືວ່າເປັນຄວາມລັບ ແລະ ບໍ່ສົ່ງຜົນຕໍ່ຂໍ້ຕົກລົງໃນສັນຍາທີ່ມີຢູ່.

# ຫລັກການ ຄຸ້ມຄອງບໍລິຫານ ໂຄງການ ແລະ ແຜນງານ

ຄວນມີການດຳເນີນງານທີ່ຫັດກຸມ ເພື່ອສົ່ງເສີມການເຂົ້າມີສ່ວນຮ່ວມ ແລະ ປົກປ້ອງສິດຂອງກຸ່ມສັງຄົມທີ່ມີອຳນາດໜ້ອຍ ແລະ ພົບເລື້ອຍໆ ວ່າບໍ່ມີສ່ວນຮ່ວມໃນການຕັດສິນບັນຫາການພັດທະນາ ໂດຍສະເພາະແມ່ຍິງ ແລະ ປະຊາຊົນ ຊົນເຜົ່າ.

## 1. ການສ້າງຂີດຄວາມສາມາດ ແລະ ການແລກປ່ຽນຄວາມຮູ້ໃນທ້ອງຖິ່ນ

- ອົງການ HELVETAS ແນໃສ່ເສີມສ້າງຂີດຄວາມສາມາດທ້ອງຖິ່ນໃນທີມງານຂອງອົງການ HELVETAS ແລະ ໃນກຸ່ມຄູ່ຮ່ວມງານ.

ອົງການ ເຮວວີຕັດ ສະວິດເພື່ອການຮ່ວມມືສາກົນ
ຕູ້ ປ.ນ. 6367, ໜ່ວຍ 09, ເຮືອນເລກທີ 155, ບ້ານທ່າພະລານໄຊ;
ເມືອງສີສັດຕະນາກ ນະຄອນຫຼວງວຽງຈັນ, ສປປ ລາວ
ໂທລະສັບ:+(856-21) 263 189; 485 016/ 017;
ແຟັກ:+(856-21) 263 190
helvetas.laos@gmail.com; www.helvetas-laos.org

- ອົງການ HELVETAS ແນໃສ່ສ້າງໂອກາດເພື່ອສົ່ງເສີມພະນັກງານທ້ອງຖິ່ນເຂົ້າຮ່ວມໃນການຕັດສິນບັນຫາ ແລະ ການຄຸ້ມຄອງໂຄງການ.
- ອົງການ HELVETAS ຊຸກຍູ້ໃຫ້ພະນັກງານທຸກຄົນແລກປ່ຽນຄວາມຮູ້ ແລະ ທັກສະຄວາມສາມາດກັບພະນັກງານນຳກັນ, ກັບຄູ່ຮ່ວມງານໂຄງການ ແລະ ເຄືອຂ່າຍຕ່າງໆ

## 2. ການວາງແຜນ ແລະ ການລະບຸບັນຫາ

- ຊຸກຍູ້ໃຫ້ພະນັກງານຂອງອົງການ HELVETAS ທຸກຄົນ ມີຄວາມກະຕືລືລົ້ນໃນການສຶກສາຮຽນຮູ້ ດ້ວຍຕົວເອງ ແລະ ຮຽນຮູ້ຈາກກັນ ແລະ ກັນ ເພື່ອໃຫ້ມີຄວາມເຂົ້າໃຈຢ່າງລະອຽດຕໍ່ກັບສະພາບການໃນຂະແໜງການພັດທະນາ ແລະ ເຂົ້າໃຈບັນຫາການປ່ຽນແປງໃນວົງກ້ວາງຢູ່ ສປປ ລາວ.
- ພະນັກງານຂອງອົງການ HELVETAS ຮັບຜິດຊອບໂດຍກົງຕໍ່ການວາງແຜນ/ການຈັດຕັ້ງປະຕິບັດກິດຈະກ□າ ແລະ ໂຄງການ ພ້ອມທັງຮັບຜິດຊອບໃນການສ້າງຄວາມເຂົ້າໃຈ ແລະ ແຈ້ງໃຫ້ ພະນັກງານຄົນອື່ນທີ່ກ່ຽວຂ້ອງຮູ້ກ່ຽວກັບບັນຫາຕ່າງໆ ທີ່ອາດຈະສົ່ງຜົນກະທົບຕໍ່ຄວາມຍືນຍົງຂອງໂຄງການ ແລະ/ຫລື ອາດຂັດກັບນະໂຍບາຍ ແລະ ຫລັກການຂອງອົງການ HELVETAS (ຕົວຢ່າງ: ການຍົກຍ້າຍຖິ່ນຖານ, ການສ□າປະທານທີ່ດິນ ແລະ ອື່ນໆ)
- ພະນັງການໂຄງການຂອງອົງການ HELVETAS ຮັບຜິດຊອບຕໍ່ການກ□ານົດຄູ່ຮ່ວມງານ, ພາກສ່ວນກ່ຽວຂ້ອງ ແລະ ກຸ່ມເປົ້າໝາຍ ບົນພື້ນຖານຫລັກການຂອງອົງການ HELVETAS, ແລະ ມີຄວາມຕື່ນຕົວ ແລະ ຊ່ວຍໃຫ້ເຂົາເຈົ້າເຂົ້າໃຈຕໍ່ກັບຫລັກການຊີ້ນໍາ, ເປົ້າໝາຍ, ຈຸດປະສົງ, ວິທີການເຮັດວຽກ ແລະ ການຄຸ້ມຄອງ ແລະ ວາງແຜນງານການເງິນຂອງໂຄງການ ກ່ອນການຈັດຕັ້ງປະຕິບັດ ກິດຈະກໍາ ຫລື ໂຄງການ.

## 3. ການຄັດເລືອກກຸ່ມເປົ້າໝາຍ

- ພະນັກງານໂຄງການຂອງອົງການ HELVETAS ສະແຫວງຫາການມີສ່ວນຮ່ວມ ໃນເຊີງລຸກ ໃນຂະບວນການຄັດເລືອກນັບຕັ້ງແຕ່ຕົ້ນ (ບໍ່ແມ່ນໃຫ້ຄູ່ຮ່ວມງານພາກລັດເທົ່ານັ້ນທີ່ເປັນຜູ້ຄັດເລືອກ…)
- ພະນັກງານຂອງອົງການ HELVETAS ຮັບຜິດຊອບໃນການຮັບປະກັນວ່າ ຄູ່ຮ່ວມງານ ແລະ ພາກສ່ວນກ່ຽວຂ້ອງໃນພາກລັດເຂົ້າ ໃຈມາດຖານຄັດເລືອກຂອງຕົນ (ອົງການ HELVETAS ເຮັດວຽກກັບກຸ່ມທີ່ມີຄວາມສ່ຽງ, ຂົງເຂດຫ່າງໄກສອກຫລີກ, ຄອບຄົວ ດ້ອຍໂອກາດ …)
- ການເຮັດວຽກກັບປະຊາຊົນຜູ້ທຸກຍາກ ຈໍາເປັນຕ້ອງໃຊ້ເວລາ ແລະ ຊັບພະຍາກອນຫລາຍ: ໂຄງການຈະພະຍາຍາມທຸກຢ່າງທີ່ເປັນໄປໄດ້ເພື່ອສະໜອງເງິນຍູ້ໜູນໃນຂັ້ນຕົ້ນ, ການຊ່ວຍແບບເຂັ້ມຂຸ້ນ, ແລະ ທຸ້ມເທເວລາຫລາຍ…

## 4. ການລວມເອົາທຸກພາກສ່ວນເຂົ້າມີສ່ວນຮ່ວມ

- ບັນຈຸພະນັກງານເພື່ອສ້າງທີມງານໃຫ້ມີຄວາມສົມດຸນດ້ານເພດ ແລະ ຄວາມຫຼາກຫຼາຍທາງຊົນເຜົ່າ ເພື່ອສາມາດ ສື່ສານໄດ້ຢ່າງມີປະສິດທິພາບໃນຂົງເຂດເປົ້າໝາຍ.
- ສ້າງຄູ່ຮ່ວມງານກັບອົງການຈັດຕັ້ງທ້ອງຖິ່ນທີ່ມີຄວາມຮູ້ກ່ຽວກັບຂົງເຂດ ແລະ ວັດທະນະທໍາໃນເຂດເປົ້າໝາຍ
- ເມື່ອເຮັດວຽກໃນພາກສະໜາມ, ພະນັກງານຂອງອົງການ HELVETAS ຄວນພະຍາຍາສື່ສານ ແລະ ແປເປັນພາສາທ້ອງຖິ່ນ. (ກັບຄູ່ຮ່ວມງານ ແລະ ບ້ານເປົ້າໝາຍ)
- ເມື່ອໃຊ້ນາຍແປພາສາ, ພະນັກງານຂອງອົງການ HELVETAS ມີຄວາມຮັບຜິດຊອບຕໍ່

- ຊອກຫາບຸກຄົນທີ່ມີຄວາມເຂົ້າໃຈພື້ນຖານກ່ຽວກັບບັນຫາກ່ຽວຂ້ອງຕ່າງໆ, ເປັນຄົນທີ່ບໍ່ທັກທຫລັງຊັ່ງບ່ຽງ ແລະ ສາມາດສື່ສານໂດຍນຳໃຊ້ພາສາທີ່ສອດຄ່ອງຫຼາຍສຸດກັບສະພາບເງື່ອນໄຂທ້ອງຖິ່ນ (ຕົວຢ່າງ: ລະຫວ່າງພາ ສາລາວ ກັບ ພາສາຊົນເຜົ່າ);
- ອຳນວຍຄວາມສະດວກໃຫ້ແກ່ຂະບວນການແປພາສາໂດຍນຳໃຊ້ຄຳສັບທີ່ເຂົ້າໃຈງ່າຍ, ປະໂຫຍກສັ້ນ, ຖ້ອຍຄຳທີ່ຊັດເຈນງ່າຍຕໍ່ການແປເປັນແຕ່ລະທ່ອນ ໂດຍບໍ່ເຮັດໃຫ້ຜູ້ແປຕ້ອງແບກຫາບຂໍ້ມູນຫຼາຍຈົນເກີນໄປ.

## 5. ການປົກປ້ອງກຸ່ມຄົນທີ່ມີຄວາມສ່ຽງ

- *ອົງການ HELVETAS ຮັບຮູ້ວ່າ ແມ່ຍິງ, ເດັກນ້ອຍ, ຄົນພິການ ແມ່ນກຸ່ມທີ່ມີຄວາມສ່ຽງ ແລະ ຕ້ອງການນະໂຍບາຍພິເສດດ້ານການປົກປ້ອງ.*

- *ພະນັກງານ ມີຄວາມຮັບຜິດຊອບໃນການຮັບປະກັນວ່າ ກິດຈະກຳແຜນງານຕ່າງໆ ຫລື ພຶດຕິກຳສ່ວນບຸກຄົນ ຈະບໍ່ເປັນໂຕຈຳກັດຄວາມສາມາດຂອງແມ່ຍິງໃການດຳເນີນບົດບາດ ແລະ ຄວາມຮັບຜິດຊອບຂອງເຂົາເຈົ້າໄດ້ຢ່າງປອດໄພ, ເດັກນ້ອຍໃນການໄດ້ຮັບການສຶກສາ ຫລື ມີຊີວິດທີ່ສົມບູນ ແລະ ມີສຸຂະພາບດີ ແລະ ຄົນພິການໃນການໄດ້ຮັບໂອກາດອັນສະເໝີພາບ ແລະ ຍຸຕິທຳ.*

## 6. ການຊ່ວຍເຫລືອເສດຖະກິດທ້ອງຖິ່ນ

- ຊົມໃຊ້ *'ສິນຄ້າຜະລິດໃນລາວ'* ເທົ່າທີ່ສາມາດເຮັດໄດ້
- ເຮັດສັນຍາກັບຊ່າງວຊານ, ທີ່ປຶກສາຄົນລາວ ເທົ່າທີ່ສາມາດເຮັດໄດ້

# ດ້ານສິ່ງແວດລ້ອມ

ອົງການ HELVETAS ມີຄວາມມຸ້ງໝັ້ນ ທີ່ຈະປົກປັກຮັກສາ ແລະ ຄຸ້ມຄອງສິ່ງແວດລ້ອມຢ່າງຍືນຍົງ ບໍ່ວ່າຈະຢູ່ພາຍໃນ ຫລື ພາຍນອກຫ້ອງການ.

## 1. ໃນຫ້ອງການ

ຊຸກຍູ້ໃຫ້ພະນັກງານທຸກຄົນ ມີຄວາມກະຕືລືລົ້ນໃນການຝຶກຝົນຕົນເອງ ແລະ ສົ່ງເສີມ:

. ການປະຫຍັດພະລັງງານ
. ການນຳໃຊ້ ແລະ ການປະຫຍັດນ້ຳ
. ການປົກປັກຮັກສາ /ການອະນຸລັກ

* ສຳລັບແນວຄິດ ແລະ ຂໍ້ມູນຂ່າວສານເພີ່ມເຕີມ, ໃຫ້ອີງໃສ່ເອກະສານຊ້ອນທ້າຍ *ຄູ່ມືແນະນຳການຮັກສາສິ່ງແວດລ້ອມຂອງ*ໂຄງການ RISE ແລະ ***ຄູ່ມືແນະນຳການຮັກສາສິ່ງແວດລ້ອມຂອງອົງການ WWF ສຳລັບອົງການພັດທະນາການທີ່ບໍ່ແມ່ນລັດຖະບານ (NGO) ຢູ່ ສປປ ລາວ***

ອົງການ ເຮວວີຕັດ ສະວິດເພື່ອການຮ່ວມມືສາກົນ
ຕູ້ ປ.ນ. 6367, ໜ່ວຍ 09, ເຮືອນເລກທີ 155, ບ້ານທ່າພະລານໄຊ;
ເມືອງສີສັດຕະນາກ ນະຄອນຫຼວງວຽງຈັນ, ສປປ ລາວ
ໂທລະສັບ:+(856-21) 263 189; 485 016/ 017;
ແຟັກ:+(856-21) 263 190
helvetas.laos@gmail.com; www.helvetas-laos.org

## 2. ຢູ່ສະໜາມ

ພະນັກງານທຸກຄົນ ມີໜ້າທີ່ຮັບຜິດຊອບເພື່ອຮັບປະກັນວ່າສິ່ງແວດລ້ອມທີ່ອົງການ HELVETAS ຈັດຕັ້ງປະຕິບັດໂຄງການ ແມ່ນໄດ້ຮັບການ ປົກປັກຮັກສາ, ແລະ/ຫລື ຖືກປັບປຸງໂດຍປະຕິບັດຕາມຄູ່ມືແນະນຳດັ່ງຕໍ່ໄປນີ້:

- ຫ້າມຖິ້ມຂີ້ເຫຍື້ອຊະຊາຍ ແລະ ຫລຸດປະລິມານຂີ້ເຫຍື້ອລົງ. ໃນຖານະເປັນຄົນນອກ, ພວກເຮົາ (ທາງໂຄງການ ແລະ ພະນັກງານ) ຕ້ອງຮັບຜິດຊອບຕໍ່ຂີ້ເຫຍື້ອທີ່ພວກເຮົາສ້າງຂຶ້ນ ໃນເຂດເປົ້າໝາຍ (ຂວດ ແລະ ຖົງຢາງພາດສະຕິກ, ກ່ອງໂຟມ ແລະ ອື່ນໆ ...)
- ຊຸກຍູ້ໃຫ້ພະນັກງານທຸກຄົນເປັນແບບຢ່າງ ແລະ ຊ່ວຍສຶກສາອົບຮົມຄູ່ຮ່ວມງານ ແລະ ກຸ່ມເປົ້າໝາຍກ່ຽວກັບຜົນກະທົບພື້ນຖານຕໍ່ສິ່ງແວດລ້ອມທີ່ເກີດຈາກການຖິ້ມຂີ້ເຫຍື້ອຊະຊາຍ ແລະ ການສ້າງມົນລະພິດຕໍ່ຊັບພະຍາກອນດິນ ແລະ ນ້ຳ ພ້ອມທັງສະໜອງທາງເລືອກທີ່ຍືນຍົງ ແລະ ງ່າຍດາຍໃຫ້ ເມື່ອເຫັນວ່າເປັນໄປໄດ້.
- ພະນັກງານ ມີຄວາມຮັບຜິດຊອບໂດຍກົງຕໍ່ການວາງແຜນກິດຈະກຳ ແລະ ໂຄງການເພື່ອຮັບປະກັນວ່າກິດຈະກຳ ແລະ ໂຄງການຕ່າງໆ ຂອງຕົນບໍ່ໄດ້ສົ່ງຜົນກະທົບທີ່ເປັນອັນຕະລາຍຕໍ່ແວດລ້ອມນິເວດແລະສັງຄົມ, ນີ້ລວມເອົາການສົ່ງເສີມການນຳໃຊ້ຊັບພະຍາກອນທ້ອງຖິ່ນໃນລັກສະນະຍືນຍົງ ແລະ ຫລີກລຽງການນຳໃຊ້ທາດເຄມີທີ່ສ້າງມົນລະພິດເປັນປັດໃຈນຳເຂົ້າ (ຕົວຢ່າງ: ສະໜອງແລະສົ່ງເສີມປັດໃຈນຳເຂົ້າອິນຊີເຂົ້າໃນກິດຈະກຳກະສິກຳຕ່າງໆ)
- ການຊື້, ການຂາຍ ຫລື ການຮັບເອົາຂອງຂ້ອນທີ່ເປັນສັດປ່າ, ຫລື ຜະລິດຕະພັນທີ່ເຮັດມາຈາກສາຍພັນທີ່ໃກ້ຈະສູນພັນ ແມ່ນເກືອດຫ້າມໂດຍເດັດຂາດ.

-

ພະນັກງານຂອງອົງການ HELVETAS ທຸກຄົນ ມີຄວາມຮັບຜິດຊອບ ໃນເຊີງລຸກ ຕໍ່ການລາຍງານແກ້ໄຂກໍລະນີຕ່າງໆ ທີ່ເຂົາເຈົ້າຮູ້ວ່າ: ພະນັກງານ ຫລື ຜູ້ປະກອບສ່ວນທີ່ມີຢູ່ ໄດ້ມີສ່ວນໃນກິດຈະກຳທີ່ສົງໃສວ່າຜິດກົດໝາຍ ຫລື ຜິດຈັນຍາທຳ ເຊິ່ງຂັດກັບສັນຍາແຮງງານ, ນະໂຍບາຍ ແລະ ລະບຽບການຄຸ້ມຄອງພະນັກງານຂອງອົງການ HELVETAS. ພວກເຮົາທຸກຄົນຕ້ອງມີຄວາມຮັບຜິດຊອບ.

ສະບັບປັບປຸງຫຼ້າສຸດ: 27 ມິຖຸນາ, 2010